*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 1, 73-80
https://doi.org/10.69692/SUJMRD09073

# Gender Role in Teak Plantation at Paklay District Sayaboury Province, Lao PDR

**KiPhet SITTHIVONG[1], Khamtan PHONETIP, Stuart LING, Latsamy BOUPHA, Somleuthai CHAISEE**

*Department of Forest Economics and Wood Technology, Faculty of Forest Science, National University of Laos, Lao PDR*

[1]***Correspondence**:*
*Kiphet SITTHIVONG*
*Faculty of Forest Science,*
*National University of Laos,*
*Tel. +856 20 2826 6646 Email:*
*kiphet.stv@gmail.com*

***Article Info:***
*Submitted: May 12, 2022*
*Revised: Jan 16, 2023*
*Accepted: Jan 30, 2023*

## Abstract

This paper investigates the gender role in teak (*Tectona grandis*) plantation in Paklay District, Xayaboury Province. There are two objectives of study: 1) to analyze the state of gender equality in plantation activities, and 2) to analyze the satisfaction of men and women in undertaking their plantation responsibilities. This research gathered data from 124 families in the three villages, which corresponded to 100% of those growing teak. The household interview gathered both quantitative and qualitative data using the data management program KOBO toolbox.

The results of showed that men and women participate equally in nine of 12 plantation activities (or 75%) being land clearing, soil preparation, planting lines, planting, tree maintenance, pruning-thinning, building a fire break, weeding and marketing (selling). In terms of satisfaction, women expressed themselves to be 'very satisfied' on a Likurt scale, whereas men were only 'satisfied'.

It was found that men and women discussed the work required in the teak plantation together and divided their responsibilities in accordance with whether the work was perceived to be light or heavy and with bodily strength of those in the household. The gender equality and mutual respect between the sexes from this cooperation meant that both men and women were satisfied.

**Keywords:** *Plantation activity, Gender role, Teak plantation*

## 1. ພາກສະເໜີ (Introduction)

ການຜະລິດກະສິກຳເປັນຂະແໜງການໜຶ່ງທີ່ຕອບສະໜອງທາງດ້ານເສດຖະກິດ-ສັງຄົມໃຫ້ມີການພັດທະນາ ໂດຍສະເພາະແມ່ນປະເທດທີ່ດ້ອຍພັດທະນາ ແລະ ກຳລັງພັດທະນາ ເຊິ່ງພວກເຂົາໄດ້ຖືເອົາວຽກງານການກະສິກຳເປັນຫຼັກ ແລະ ເປັນປັດໄຈທີ່ສຳຄັນ ແຕ່ອາດມີຜົນເຮັດໃຫ້ໄດ້ຮັບຜະລິດທີ່ຕ່ຳ ຫຼື ສູງ ແມ່ນຂຶ້ນກັບເງື່ອນໄຂຂອງສະພາບແວດລ້ອມໃນພື້ນທີ່ນັ້ນ (Raney et al., 2011). ຂະແໜງກະສິກຳ ແລະ ປ່າໄມ້ ແມ່ນຂະແໜງໜຶ່ງທີ່ມີບົດບາດສຳຄັນໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດທີ່ໄດ້ຖືເອົາຂະແໜງການດັ່ງກ່າວເປັນປັດໄຈສຳຄັນໃນການພັດທະນາປະເທດຊາດ ໂດຍການຫັນເອົາເສດຖະກິດທຳມະຊາດໄປສູ່ເສດຖະກິດສິນຄ້າ (MAF, 2015); ໃນນີ້ ແມ່ຍິງມີບົດບາດສຳຄັນໃນວຽກງານກະສິກຳ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ຊຶ່ງມີໜ້າທີ່ຕົ້ນຕໍໃນການຮັບປະກັນທາງດ້ານສະບຽງອາຫານຂອງຄອບຄົວ; ເຊັ່ນກັນກັບວຽກງານກະສິກຳທີ່ກວມເອົາ 80% ຂອງແຮງງານທັງໝົດ ເທົ່າກັບ 2.4 ລ້ານຄົນ ປະກອບມີແມ່ຍິງ ທີ່ເຮັດວຽກຫຼາຍກວ່າເຄິ່ງໜຶ່ງເທົ່າກັບ 54% ຊຶ່ງອາດເກີດຈາກການຮັບຮູ້ທາງດ້ານບົດບາດຍິງ-ຊາຍ ຂອງສັງຄົມຢູ່ໃນລະດັບທີ່ຕ່ຳ ຈຶ່ງເປັນສາເຫດທີ່ເຮັດໃຫ້ບົດບາດຂອງແມ່ຍິງບໍ່ມີຄຸນຄ່າ ແລະ ຖືກເບິ່ງຂ້າມ (Lao Women Union, 2005).; ແມ່ຍິງ ບໍ່ພຽງແຕ່ມີສ່ວນຮ່ວມໃນການ

ເຮັດວຽກຢູ່ບ້ານເຮືອນ ຫຼື ຄົວເຮືອນພຽງຢ່າງດຽວ ແຕ່ຍັງໄດ້ເຂົ້າຮ່ວມກິດຈະກຳຫຼາຍຢ່າງກ່ຽວກັບການກະເສດ ໃນນັ້ນມີຫຼາຍກິດຈະກຳທີ່ມີຄວາມໂດດເດັ່ນທາງດ້ານໜ້າທີ່ຮັບຜິດຊອບລະຫວ່າງ ຍິງ ແລະ ຊາຍ, ຜູ້ຊາຍ ມີໜ້າທີ່ຮັບຜິດຊອບຫຼັກໃນກິດຈະກຳການບຳລຸງຮັກສາ, ການຂົນສົ່ງ, ການປູກ, ການກຽມດິນ ແລະ ການເກັບກ່ຽວ ເທົ່າກັບ 71%, ສ່ວນແມ່ຍິງ ຮັບຜິດຊອບໃນກິດຈະກຳນອກລະດູການເກັບກ່ຽວ ແລະ ການຕະຫຼາດ ເທົ່າກັບ 29% (Pasaribu, Safe, & Kaskoyo, 2019).; ການວິເຄາະບົດບາດທາງເພດໃນອຸດສາຫະກຳປາມນ້ຳມັນຢູ່ເມືອງ Kwaebibirem ປະເທດ Ghana ທາງດ້ານການມີສ່ວນຮ່ວມຂອງເພດຍິງ ແລະ ຊາຍ ໃນກິດຈະກຳການປູກປາມນ້ຳມັນ ເພດຊາຍເປັນຜູ້ຮັບຜິດຊອບຫຼັກໃນຫຼາຍກິດຈະກຳເຊິ່ງປະກອບມີ ການເຊົ່າທີ່ດິນ, ການຂຸດຄົ້ນ, ການປັກຫຼັກໝາຍ, ລ້ອມຮົ້ວ, ໃສ່ປຸ໋ຍ, ເກັບກ່ຽວ ແລະ ຂົນໃສ່ ກວມເອົາໃນອັດຕາສ່ວນຫຼາຍໃນການຮັບຜິດຊອບເທົ່າກັບ 58.3% ຈາກທັງໝົດ 12 ກິດຈະກຳ, ຮອງລົງມາແມ່ນການຮັບຜິດຊອບຮ່ວມກັນ ຍິງ ແລະ ຊາຍ ກວມເອົາ 33.3%, ເພດຍິງມີໜ້າທີ່ຫຼັກຕໍ່ກິດຈະກຳນີ້ 8.4% ໃນກິດຈະກຳການເກັບທ້ອນ/ທ້ອນໂຮມ (Sarku, 2016).; ເຊິ່ງກ່ອນໜ້ານີ້ທາງປະເທດການາ ໂດຍສະເພາະປະຊາຊົນ ມີແນວຄິດຮັກສາສິ່ງແວດລ້ອມ ໂດຍການປູກໄມ້ດ້ວຍຄວາມສະໝັກໃຈເພື່ອຫຼຸດຜ່ອນການທຳລາຍປ່າໄມ້ອີກດ້ວຍ (Ahiable, 1996).

ສຳລັບບົດບາດຍິງ-ຊາຍ ໃນສວນປູກໄມ້ ແລະ ການກະສິກຳ ກໍ່ເປັນປັດໄຈໜຶ່ງທີ່ຄວນໄດ້ຮັບການຊຸກຍູ້ ແລະ ສົ່ງເສີມ; ເຊິ່ງໃນໄລຍະຜ່ານມາມີຫຼາຍອົງການ, ຫຼາຍໜ່ວຍງານ ທີ່ໄດ້ມີການຄົ້ນຄວ້າທາງດ້ານບົດບາດຍິງ-ຊາຍເຊັ່ນ: ການຄົ້ນຄວ້າທາງດ້ານບົດບາດ ຍິງ-ຊາຍ ຢູ່ໃນວຽກງານຂອງ ໂຄງການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ ຫຼື ເອີ້ນອີກຢ່າງໜຶ່ງວ່າ Reducing Emissions from Deforestation and Degradation (REDD+) ເປັນຕົ້ນແມ່ນໃນປະເທດອິນໂດເນເຊຍ ແລະ ປະເທດມຽນມາ ເຊິ່ງເນື້ອໃນບາງຕອນໄດ້ກ່າວວ່າ: ໃນປະເທດອິນໂດເນເຊຍລັດຖະບານໄດ້ມີການລົງນາມເຊັນສັນຍາວ່າດ້ວຍ ການຈັດການເລືອກປະຕິບັດຕໍ່ແມ່ຍິງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ ຫຼື ເອີ້ນວ່າສົນທິສັນຍາ Convention on the Elimination of All Forms of Discrimination Against Women (CEDAW) ເພື່ອແກ້ໄຂບັນຫາບົດບາດ ຍິງ-ຊາຍ ເຂົ້າໃນການພັດທະນາຫຼາຍຂະແໜງ, ໃນນັ້ນກໍມີຂະແໜງປ່າໄມ້ ແລະ ອົງການຈັດຕັ້ງເຄິ່ງລັດ ເຂົ້າມາມີສ່ວນຮ່ວມໃນການເຄື່ອນໄຫວ ແລະ ແກ້ໄຂບັນຫາບົດບາດ ຍິງ-ຊາຍ ແລະ ໃຫ້ບໍລິການແກ່ແມ່ຍິງໃນຂະແໜງການພັດທະນາຕ່າງໆ (RECOFTC, 2013). ປະເທດມຽນມາ ເປັນປະເທດໜຶ່ງທີ່ໄດ້ເຂົ້າຮ່ວມລົງນາມເຊັນສັນຍາ CEDAW ແລະ ໄດ້ມີການຮ່າງແຜນງານໃນການຈັດຕັ້ງປະຕິບັດ ແລະ ສົ່ງເສີມທາງດ້ານບົດບາດຂອງແມ່ນຍິງໃນປີ (2011-2015) ຊຶ່ງແຜນດັ່ງກ່າວໄດ້ຍົກສູງບົດບາດຂອງແມ່ຍິງທຸກຄົນໄດ້ຮັບອຳນາດ ແລະ ມີສິດເຕັມທີ່ ພ້ອມທັງໄດ້ຮັບການສະໜັບສະໜູນຈາກລັດຖະບານຂອງພວກເຂົາ (RECOFTC, 2013). ສຳລັບປະເທດລາວ ໄດ້ເລີ່ມມີນະໂຍບາຍປ່າໄມ້ ນັບຕັ້ງແຕ່ປີ 1987, ທີ່ເປັນການເລີ່ມມີການເຊື່ອມສານບົດບາດ ຍິງ-ຊາຍ ເຖິງຢ່າງໃດກໍ່ຕາມ, ອາດຈະມີມາດຕະການທາງດ້ານນະໂຍບາຍ ແລະ ສະຖາບັນການຈັດຕັ້ງຮັບຜິດຊອບ, ແຕ່ກໍ່ຍັງມີຊ່ອງຫວ່າງ ໂດຍສະເພາະກ່ຽວກັບຂະບວນການກຳນົດ ແລະ ການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ. ເນື່ອງຈາກມີຄວາມບໍ່ຈະແຈ້ງໃນການກຳນົດກ່ຽວກັບພາລະບົດບາດຄວາມຮັບຜິດຊອບຂອງຜູ້ຊາຍ ແລະ ແມ່ຍິງ ໃນກິດຈະກຳການຄຸ້ມຄອງປ່າໄມ້ຕ່າງໆ, ການຈັດຕັ້ງປະຕິບັດນະໂຍບາຍກໍ່ຍັງບໍ່ທັນໄດ້ດີ, ຊ່ອງຫວ່າງບົດບາດຍິງ-ຊາຍ ຢູ່ໃນຂະແໜງການປ່າໄມ້ຍັງຄົງຄ້າງ ແລະ ຍັງບໍ່ທັນໄດ້ຮັບການແກ້ໄຂເທື່ອ (RECOFTC, 2013).; ອີງຕາມລັດຖະທຳມະນູນໃນປີ 1991 ຂອງ ສປປ ລາວ ໄດ້ຮັບປະກັນສິດເທົ່າທຽມກັນລະຫວ່າງຍິງ-ຊາຍ ທາງດ້ານການເມືອງ, ວັດທະນະທຳ ແລະ ສັງຄົມ. ໃນປີ 2003, ມີການປັບປຸງລັດຖະທຳມະນູນໂດຍຢັ້ງຢືນຄວາມພະຍາຍາມໃນການສະໜັບສະໜູນຄວາມກ້າວໜ້າຂອງແມ່ຍິງ ແລະ ປົກປ້ອງສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງແມ່ຍິງ ແລະ ເດັກນ້ອຍ (RECOFTC, 2013). ເຊິ່ງສະແດງໃຫ້ເຫັນໃນໄລຍະມໍ່ໆມານີ້ພາກທຸລະກິດໄມ້ ໂດຍສະເພາະແມ່ນ ຂົງເຂດອຸດສະຫະກຳປຸງແຕ່ງໄມ້ແມ່ນໄດ້ເອົາໃຈໃສ່ວຽກງານດ້ານບົດບາດຍິງຊາຍ ໂດຍຍົກສູງພາລະບົດບາດຄວາມຮັບຜິດຊອບຂອງແມ່ຍິງໃຫ້ຢູ່ໃນຖັນແຖວລະດັບຜູ້ຈັດການສາຍງານການຜະລິດໄມ້ອັດ ແລະ ມີຈຳນວນແມ່ຍິງຫຼາຍສົມຄວນ (Phonetip et al; 2021) ແລະ ການຜະລິດໄມ້ສັກເປັນຜະລິດຕະພັນເຟີນີເຈີ (Smith & Ling, 2020). ຖ້າຄິດເປັນເປີເຊັນແມ່ນກວມເອົາ 56% ແມ່ນເພດຍິງ (Ling, S and Phonetip, K. 2022).

ການມີສ່ວນຮ່ວມຂອງຍິງ ແລະ ຊາຍໃນກິດຈະກຳສວນປູກໃນ ສປປ ລາວ ໃນໄລຍະຜ່ານມາຍັງບໍ່ທັນໄດ້ມີການລາຍງານການຄົ້ນຄວ້າເທື່ອ, ສະນັ້ນ "ບົດບາດຍິງ-ຊາຍໃນວຽກງານປູກໄມ້ສັກ ຂອງປະຊາຊົນ " ທີ່ສຶກສາເຖິງຄວາມເທົ່າທຽມກັນລະຫວ່າງຍິງ ແລະ ຊາຍ ເພື່ອເປັນແນວທາງ, ເຄື່ອງມືໜຶ່ງ ທີ່ສາມາດຊ່ວຍລັດຖະບານໃນການປັບປຸງ, ແກ້ໄຂ, ຂໍ້ກຳນົດ, ກົດໝາຍຕ່າງໆ ທີ່ເປັນການສົ່ງເສີມທາງດ້ານບົດບາດຍິງ-ຊາຍ ໂດຍສະເພາະແມ່ນວຽກງານທາງດ້ານຂະແໜງການກະສິກຳ ແລະ ປ່າໄມ້ ໃຫ້ມີຄວາມສະເໝີພາບເທົ່າທຽມກັນ.

ຈຸດປະສົງຂອງການຄົ້ນຄວ້າຄັ້ງນີ້ມີຄື: 1) ເພື່ອວິເຄາະຄວາມສະເໝີພາບ ຍິງ-ຊາຍ ໃນກິດຈະກຳສວນປູກໄມ້ ແລະ 2) ເພື່ອວິເຄາະລະດັບຄວາມເພິ່ງພໍໃຈ (ຍິງ-ຊາຍ) ຕໍ່ໜ້າທີ່ຮັບຜິດຊອບໃນກິດຈະກຳສວນປູກ.

## 2. ອຸປະກອນ ແລະ ວິທີການການສຶກສາ (Materials and Methods)

### 2.1 ວິທີເກັບກຳຂໍ້ມູນ ແລະ ດຳເນີນການຄົ້ນຄວ້າ

ໃນການເກັບກຳຂໍ້ມູນໄດ້ຈັດແບ່ງອອກເປັນ 2 ຂັ້ນຕອນຄື:

❖ **ຂັ້ນຕອນທີ 1:** ກະກຽມຂໍ້ມູນ

- ໄດ້ມີການຊອກຫາຂໍ້ມູນເບື້ອງຕົ້ນກ່ຽວກັບສະຖານທີ່ເພື່ອລົງເກັບຂໍ້ມູນ ໂດຍມີການໄຈ້ແຍກຈຸດປະສົງ ແລະ ສ້າງແບບສອບຖາມໃຫ້ກົງກັບຈຸດປະສົງທີ່ຕັ້ງໄວ້ ເຊິ່ງກວມເອົາຂົງເຂດກົດໝາຍວ່າດ້ວຍຄວາມສະເໝີພາບຍິງ-ຊາຍ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ກົດໝາຍແຮງງານ, ກົດໝາຍປ່າໄມ້, ນະໂຍບາຍ ແລະ ດຳລັດທີ່ກ່ຽວຂ້ອງກັບສວນປູກ ແລະ ການສົ່ງເສີມການປູກໄມ້.

- ກະກຽມຂໍ້ມູນ, ອອກແບບ ແລະ ສ້າງແບບຟອມສຳພາດ ເພື່ອໃຫ້ໄດ້ຂໍ້ມູນລະອຽດທີ່ສຸດ.

- ສະໝັກລົງຊື່ເຂົ້າໃຊ້ Program Kobo Tool box (KoboToolbox, 2022) ແລະ Google form ຜ່ານຄອມພິວເຕີໂນດບຸກ ແລະ ສ້າງແບບສອບຖາມໃສ່ (Google, 2022).

- ທົດລອງໃຊ້ແບບຟອມສຳພາດ ດ້ວຍການໃຊ້ໂທລະສັບມືຖື ເພື່ອເປັນການທົດສອບແບບຟອມໃຫ້ມີຄວາມສະດວກ, ຄ່ອງແຄ້ວຕໍ່ກັບການນຳໃຊ້ຂໍ້ມູນສຳພາດຜ່ານ Program ນີ້.

- ກວດສອບ, ປັບປຸງ ແລະ ດັດແກ້ແບບຟອມສຳພາດ ໃຫ້ມີຄວາມລະອຽດຫຼາຍຂຶ້ນ.

❖ **ຂັ້ນຕອນທີ 2:** ການເກັບຂໍ້ມູນ

ເພື່ອຕອບຕາມຈຸດປະສົງການສຳພາດໄດ້ແບ່ງອອກເປັນ 2 ລະດັບຄື: ສຳພາດອຳນາດການປົກຄອງບ້ານ ແລະ ປະຊາຊົນ. ພາຍຫຼັງທີ່ໄດ້ຈັດແບ່ງຂັ້ນຕອນ ແລະ ຂອບເຂດຂອງການເກັບກຳຂໍ້ມູນແລ້ວ ຈາກນັ້ນກໍ່ລົງສຳພາດຂໍ້ມູນຕົວຈິງຕາມແຕ່ລະ ລະດັບດັ່ງທີ່ໄດ້ກຳນົດໄວ້ໂດຍການໃຊ້ແບບຟອມສຳພາດແບບເຄິ່ງໂຄງສ້າງ ຊຶ່ງໄດ້ນຳໃຊ້ແບບຟອມສຳພາດ, Program Kobo Toolbox, Google form ຜ່ານທາງໂທລະສັບມືຖື ເຂົ້າຊ່ວຍໃນການເກັບກຳຂໍ້ມູນສຳພາດ, ນອກນັ້ນຍັງໄດ້ມີການສຳພາດຜ່ານທາງ Video call ແລະ ການໂທສຳພາດຜ່ານໂທລະສັບມືຖື.

### 2.2 ປະຊາກອນ ແລະ ກຸ່ມຕົວຢ່າງ

ການຄົ້ນຄວ້າຄັ້ງນີ້ ໄດ້ຄັດເລືອກເອົາປະຊາຊົນທີ່ອາໄສຢູ່ໃນ 3 ບ້ານທີ່ຂຶ້ນກັບເມືອງປາກລາຍຄື: ບ້ານ ຫ້ວຍຊາຍຄຳ, ບ້ານ ນາສະຫວ່າງ ແລະ ບ້ານ ໄຊຍະມຸງຄຸນ ນອກນັ້ນ, ຍັງໄດ້ກຳນົດເອົາກຸ່ມຂອງປະຊາກອນຕົວຢ່າງ ໂດຍກຳນົດເອົາ 100% ຂອງຈຳນວນປະຊາກອນໃນສາມບ້ານ ທີ່ເປັນຄອບຄົວປະຊາຊົນຜູ້ທີ່ມີສວນປູກໄມ້ສັກ, ເຊິ່ງປະກອບມີຈຳນວນປະຊາກອນທັງໝົດເທົ່າກັບ 124 ຄອບຄົວ ກຸ່ມປະຊາກອນດັ່ງກ່າວນີ້ເປັນກຸ່ມຊົນເຜົ່າລາວລຸ່ມ ແລະ ຖືສາສະໜາພຸດ 100%. ພາຍຫຼັງທີ່ໄດ້ຈຳນວນຄອບຄົວຜູ້ທີ່ມີສວນປູກແລ້ວແມ່ນໄດ້ມີການຄັດເລືອກເອົາຄອບຄົວລະ 1 ຄົນ ເພື່ອເປັນຕົວແທນຂອງປະຊາກອນຕົວຢ່າງໃນການໃຫ້ຂໍ້ມູນໃນການສຳພາດ ເຊິ່ງປະຊາກອນດັ່ງກ່າວແມ່ນເກີດຈາກຄວາມສະໝັກໃຈທີ່ຈະເປັນຕົວແທນຜູ້ຕາງໜ້າຈາກຄອບຄົວເຊິ່ງປະກອບມີຈຳນວນຜູ້ທີ່ເຂົ້າຮ່ວມເປັນ ຍິງ 52 ຄົນ ແລະ ຊາຍ 72 ຄົນ.

### 2.3 ວິທີການວິເຄາະຂໍ້ມູນ

ຂໍ້ມູນໄດ້ຖືກນຳມາວິເຄາະດ້ວຍ ສະຖິຕິພັນລະນາ (Descriptive Statistic) ເພື່ອຊອກຫາຄ່າ ສະເລ່ຍ (Mean), ຄ່າຖານນິຍົມ (Mode) ແລະ ຄ່າບ່ຽງເບນມາດຕະຖານ (Standard Deviation: SD); ການໃຊ້ສູດທີ່ມີເງື່ອນໄຂ IF ເພື່ອວິເຄາະຫາຄ່າລະດັບຂອງຄວາມເພິ່ງພໍໃຈ ຕໍ່ກັບໜ້າວຽກ ຫຼື ໜ້າທີ່ຮັບຜິດຊອບລະຫວ່າງ ຍິງ-ຊາຍ ໃນການປະຕິບັດແຕ່ລະກິດຈະກຳຂອງສວນປູກ ໂດຍວິເຄາະຫາຄ່າສະເລ່ຍ, SD ແລະ ການວັດລະດັບຄ່າເກນການປະເມີນລະດັບຄວາມເພິ່ງພໍໃຈ ທີ່ໄດ້ກຳນົດໄວ້ມີ 4

ລະດັບຄື: (1) ບໍ່ພໍໃຈ; (2) ພໍໃຈໜ້ອຍ; (3) ພໍໃຈປານກາງ; (4) ພໍໃຈຫຼາຍ.

## 3. ຜົນໄດ້ຮັບ (Results)

### 3.1 ຜົນໄດ້ຮັບການສຶກສາກ່ຽວກັບເພດ

ຜ່ານການສຳພາດ ແລະ ເກັບກຳຂໍ້ມູນຕົວຈິງໃນກຸ່ມປະຊາກອນຕົວຢ່າງຈຳນວນ 124 ຄອບຄົວ ສາມາດຈັດແບ່ງຕາມເພດທີ່ເປັນຕົວແທນຂອງຄອບຄົວໄດ້ດັ່ງນີ້: ເພດຍິງ ມີ 41.94 %. ເພດຊາຍ ມີ 58.06 %. (ຮູບພາບທີ 1)

### 3.2 ຄວາມສະເໝີພາບຍິງ-ຊາຍໃນກິດຈະກຳສວນປູກ

ຮູບພາບທີ 2 ສະແດງໃຫ້ເຫັນເຖິງຜົນການວິເຄາະຂໍ້ມູນກ່ຽວກັບຄວາມສະເໝີພາບຍິງ-ຊາຍໃນກິດຈະກຳປູກໄມ້ ທີ່ສາມາດສັງລວມກິດຈະກຳທັງໝົດເລີ່ມແຕ່ປູກຈົນຮອດຂາຍ ເຊິ່ງປະກອບມີທັງໝົດ 12 ກິດຈະກຳ, ໃນແຕ່ລະກິດຈະກຳໄດ້ມີການຈັດແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບກັນລະຫວ່າງເພດຍິງ ແລະ ເພດຊາຍ; ຕໍ່ກັບກິດຈະກຳຂອງສວນປູກນີ້ພວກເຮົາໄດ້ມີການຈັດລຳດັບຕາມຂັ້ນຕອນທີ່ໄດ້ປະຕິບັດຕົວຈິງໃນສວນປູກ ແລະ ໄດ້ສະແດງຄ່າຕົວເລກທີ່ຄິດໄລ່ເປັນເປີເຊັນ (%) ໃນການປະຕິບັດໜ້າທີ່ຕົວຈິງໃນສວນປູກຄື:

(1)ກິດຈະກຳ1 (AT1): ການບຸກເບີກພື້ນທີ່, ຮື້ ແມ່ນເພດຊາຍ ມີຄ່າສະເລ່ຍເທົ່າກັບ 73.39%;

(2)ກິດຈະກຳ2 (AT2): ກຽມດິນ ແມ່ນຊາຍ ມີຄ່າສະເລ່ຍ 55.65%;

(3)ກິດຈະກຳ3 (AT3): ວາງແລວ ແມ່ນຊາຍ ມີຄ່າສະເລ່ຍ 60.48%;

(4)ກິດຈະກຳ4 (AT4): ຂຸດຂຸມ ແມ່ນຊາຍ ມີຄ່າສະເລ່ຍ 88.71%;

(5)ກິດຈະກຳ5 (AT5): ປູກ ແມ່ນຊາຍ ມີຄ່າສະເລ່ຍ 61.29%;

(6)ກິດຈະກຳ6 (AT6): ບົວລະບັດ-ຮັກສາ ແມ່ນຍິງ ແລະ ຊາຍ ມີຄ່າສະເລ່ຍເທົ່າກັບ 50%;

(7)ກິດຈະກຳ7 (AT7): ໃສ່ປຸ໋ຍ ແມ່ນຊາຍ ມີຄ່າສະເລ່ຍ 97.58%;

(8)ກິດຈະກຳ8 (AT8): ລິກິ່ງ-ຕັດສາງ ແມ່ນຊາຍ ມີຄ່າສະເລ່ຍ 53.23%;

(9)ກິດຈະກຳ9 (AT9): ແລວກັນໄຟ ແມ່ນຊາຍ ມີຄ່າສະເລ່ຍ 54.84%;

(10) ກິດຈະກຳ10 (AT10): ເສຍຫຍ້າ ແມ່ນຊາຍ ມີຄ່າສະເລ່ຍ 53.23%;

(11) ກິດຈະກຳ11 (AT11): ຂຸດຄົ້ນ ແມ່ນຊາຍ ມີຄ່າສະເລ່ຍ 96.77%;

(12) ກິດຈະກຳ12 (AT12): ການຕະຫຼາດ ແມ່ນຊາຍ ມີຄ່າສະເລ່ຍ 55.65%.

ຈາກຜົນການວິເຄາະທີ່ໄດ້ສະແດງຂ້າງເທິງ ເຫັນໄດ້ວ່າ: ໃນທຸກກິດຈະກຳສວນປູກໄມ້ເຖິງວ່າ ເພດຍິງ ຈະບໍ່ມີໜ້າທີ່ຮັບຜິດຊອບຫຼັກກໍຕາມ, ແຕ່ພວກເຂົາກໍມີສ່ວນຮ່ວມໃນແຕ່ລະກິດຈະກຳ. ນອກນັ້ນ, ພວກເຂົາ (ເພດຍິງ) ສຳພັດມີໜ້າທີ່ຮັບຜິດຊອບຫຼັກໃນກິດຈະກຳອື່ນພາຍໃນຄອບຄົວຂອງເຂົາເຈົ້າ ເນື່ອງຈາກວ່າໃນທຸກກິດຈະກຳຂອງສວນປູກໂດຍສ່ວນໃຫຍ່ແມ່ນເປັນວຽກທີ່ຂ້ອນຂ້າງໃຊ້ແຮງງານໜັກ ສະນັ້ນ, ພວກເຂົາຈຶ່ງໄດ້ມີການຈັດແບ່ງໜ້າທີ່ຮັບຜິດຊອບກັນພາຍໃນຄອບຄົວຂອງພວກເຂົາ (ຜົວ-ເມຍ) ທີ່ອີງຕາມໜ້າວຽກ ແລະ ຄວາມແຂງແຮງທາງດ້ານຮ່າງກາຍລະຫວ່າງ ຍິງ-ຊາຍ ທັງນີ້ກໍ່ເພື່ອຄວາມສະເໝີພາບ ແລະ ການໃຫ້ກຽດເຊິ່ງກັນ ແລະ ກັນລະຫວ່າງ ຜົວ-ເມຍ ທີ່ດຳລົງຊີວິດຢູ່ຮ່ວມກັນໃນຄອບຄົວຂອງພວກເຂົາ.

### 3.3 ຄວາມເພິ່ງພໍໃຈຕໍ່ໜ້າວຽກຂອງ ເພດຍິງ

ຜ່ານການວິເຄາະສະແດງໃຫ້ເຫັນວ່າ ເພດຍິງ ມີຄ່າລະດັບຄະແນນທີ່ມີເກນກວມເອົາໃນອັດຕາສ່ວນຫຼາຍຢູ່ໃນລະດັບທີ່ມີຄວາມ " **ພໍໃຈ** " ຫາ " **ພໍໃຈຫຼາຍ** "; ໃນນັ້ນມີກິດຈະກຳ 8 ທີ່ສະແດງຄ່າ ທີ່ຕ່າງຈາກກິດຈະກຳອື່ນ ເນື່ອງຈາກມີເພດຍິງຈຳນວນໜຶ່ງທີ່ມີຄວາມເພິ່ງພໍໃຈຕໍ່ໜ້າວຽກຂອງຕົນເອງໃນລະດັບທີ່ຕ່ຳ ເຊິ່ງພວກເຂົາໃຫ້ເຫດຜົນວ່າໜ້າວຽກໃນກິດຈະກຳນີ້ເປັນວຽກທີ່ໜັກສຳລັບພວກເຂົາ. (ຮູບພາບທີ 3);

### 3.4 ຄວາມເພິ່ງພໍໃຈຕໍ່ໜ້າວຽກຂອງ ເພດຊາຍ

ຜົນການວິເຄາະລະດັບຄວາມເພິ່ງພໍໃຈຂອງ ເພດຊາຍ ສະແດງໃຫ້ເຫັນວ່າ: ເພດຊາຍ ມີຄ່າລະດັບຄວາມເພິ່ງພໍໃຈຢູ່ທີ່ " **ພໍໃຈ** " ຫາ " **ພໍໃຈຫຼາຍ** " ແລະ ມີຄ່າບ່ຽງເບນມາດຕະຖານທີ່ບໍ່ມີຄວາມແຕກຕ່າງກັນ; ນີ້ສະແດງໃຫ້ເຫັນວ່າ: ເພດຊາຍ ແມ່ນມີຄວາມເພິ່ງພໍໃຈຕໍ່ກັບໜ້າທີ່ຮັບຜິດຊອບຂອງຕົນເອງ. (ຮູບພາບທີ 4);

### 3.4 ສົມທຽບລະດັບຄວາມເພິ່ງພໍໃຈລະຫວ່າງ ຍິງ-ຊາຍ ຕໍ່ໜ້າວຽກ

ຜົນຂອງການວິເຄາະສະແດງໃຫ້ເຫັນວ່າ: ຍິງ ແລະ ຊາຍ ມີລະດັບຄວາມເພິ່ງພໍໃຈທີ່ຕ່າງກັນ ເຊິ່ງສະແດງໃຫ້ເຫັນວ່າ ເພດຍິງ ມີຄ່າລະດັບຄວາມເພິ່ງຢູ່ທີ່ " **ພໍໃຈຫຼາຍ** " ກວມເອົາໃນອັດຕາສ່ວນຫຼາຍ; ເພດຊາຍ ມີລະດັບຄ່າຄວາມເພິ່ງພໍໃຈທີ່ " **ພໍໃຈ** "; ເມື່ອທຽບກັນແລ້ວທັງຍິງ-ຊາຍ ແມ່ນມີ 1 ກິດຈະກຳທີ່ມີຄວາມແຕກຕ່າງກັນຫຼາຍຄື: ກິດຈະກຳທີ 8 ຫຼື AT8 ເນື່ອງຈາກມີ ເພດຍິງຈຳນວນໜຶ່ງ

ທີ່ມີຄວາມເພິ່ງພໍໃຈຕໍ່ໜ້າວຽກຂອງຕົນເອງໃນລະດັບຕໍ່າ ຍ້ອນວ່າພວກເຂົາ (ແມ່ຍິງ) ເຫັນວ່າໜ້າວຽກໃນກິດຈະກໍານີ້ແມ່ນເປັນວຽກທີ່ຂ້ອນຂ້າງໜັກ, ໃຊ້ເວລາດົນ ແລະ ຕ້ອງໄດ້ເອົາໃຈໃສ່ເປັນພິເສດ ເຮັດໃຫ້ພວກເຂົາບໍ່ຄ່ອຍມີເວລາໃນການເຮັດວຽກອື່ນໆ ໃນຄອບຄົວ, ແຕ່ພວກເຂົາກໍ່ບໍ່ສາມາດປະຕິເສດ ແລະ ປະລະໜ້າທີ່ຮັບຜິດຊອບຂອງຕົນໄດ້. (ຮູບພາບທີ 5)

## 4. ວິພາກຜົນ (Discussion)

ຄວາມສະເໝີພາບ ຍິງ-ຊາຍ ໃນກິດຈະກໍາສວນປູກໄມ້ສັກຂອງປະຊາຊົນ ອີງຕາມຜົນການຄົ້ນຄວ້າເຫັນວ່າ ທັງຍິງ ແລະ ຊາຍ ມີຄວາມສະເໝີພາບທີ່ເທົ່າທຽມກັນ ໂດຍອີງຕາມຄວາມໜັກເບົາທາງດ້ານໜ້າວຽກ, ຄວາມແຂງແຮງທາງດ້ານຮ່າງກາຍ, ວັດທະນາທໍາ ແລະ ຮີບຄອງປະເພນີທີ່ໄດ້ປະຕິບັດສືບຕໍ່ກັນມາ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຜ່ານມາຄື: Davio (2021) ໄດ້ສຶກສາກ່ຽວກັບການມີສ່ວນຮ່ວມຂອງແມ່ຍິງໃນການຄຸ້ມຄອງປ່າໄມ້ບ້ານ ເຊິ່ງມີເນື້ອໃນຕອນໜຶ່ງໃນບົດຄົ້ນຄວ້າທີ່ໄດ້ກ່າວວ່າ: ບົດບາດລະຫວ່າງ ຍິງ-ຊາຍ ແມ່ນໄດ້ຮັບອິດທິພົນມາຈາກຮີດຄອງປະເພນີທີ່ເປັນເອກະລັກຂອງແຕ່ລະຊົນເຜົ່າ ແລະ ຮີດຄອງປະເພນີ ຊຶ່ງການແບ່ງວຽກແບບດັ້ງເດີມ ອາດເວົ້າໄດ້ວ່າເປັນຂໍ້ຈໍາ ກັດອັນຍິ່ງໃຫຍ່ໃຫ້ແກ່ການບັນລຸ ແລະ ກ້າວໄປເຖິງຄວາມສະເໝີພາບຂອງ ຍິງ-ຊາຍ ໃນປະເທດລາວເຊັ່ນວ່າ: ກຸ່ມ ລາວ-ໄຕ ກວມເອົາ 67% ຂອງພົນລະເມືອງລາວ ໃນນັ້ນມີຊົນເຜົ່າຍ່ອຍທີ່ເຂົາເຈົ້າໄດ້ມີຂໍ້ກໍານົດສິດໃນການເຂົ້າເຖິງ ແລະ ການນໍາໃຊ້ທີ່ດິນຕາມຮີດຄອງປະເພນີ ໂດຍມີການຕິດພັນກັບປະເພນີທີ່ຖືເອົາຫຼັກຄວາມແຕກຕ່າງລະຫວ່າງເພດ ຍິງ-ຊາຍ; (Lao Women Union, 2005) ແມ່ຍິງ ມີບົດບາດສໍາຄັນໃນວຽກງານກະສິກໍາ ແລະ ການນໍາໃຊ້ຊັບພະຍາກອນທໍາມະຊາດ ຊຶ່ງມີໜ້າທີ່ຕົ້ນຕໍໃນການຮັບປະກັນທາງດ້ານສະບຽງອາຫານຂອງຄອບຄົວ; (Pasaribu, Safe, & Kaskoyo, 2019) ທີ່ໄດສຶກສາກ່ຽວກັບ The Gender Role in Agroforestry Management in Sungai Indonesia ໄດ້ກ່າວວ່າ: ແມ່ຍິງ ບໍ່ພຽງແຕ່ມີສ່ວນຮ່ວມໃນການເຮັດວຽກຢູ່ບ້ານເຮືອນ ຫຼື ຄົວເຮືອນພຽງຢ່າງດຽວ ແຕ່ຍັງໄດ້ເຂົ້າຮ່ວມກິດຈະກໍາກ່ຽວກັບການກະເສດ ໃນນັ້ນມີຫຼາຍກິດຈະກໍາທີ່ມີຄວາມໂດດເດັ່ນທາງດ້ານ ໜ້າທີ່ຮັບຜິດຊອບລະຫວ່າງ ຍິງ ແລະ ຊາຍ ເຊັ່ນ: ໃນກິດຈະກໍາການບໍາລຸງຮັກສາ, ການຂົນສົ່ງ ຊາຍ ມີໜ້າທີ່ຜິດຊອບ 100% ແລະ ຫຼັງການເກັບກ່ຽວ, ການຕະຫຼາດ ແມ່ນຍິງ ເປັນຜູ້ຮັບຜິດຊອບເປັນສ່ວນໃຫຍ່ກວມເອົາ 93.02%, ແຕ່ຜົນຄົ້ນຄວ້າຂອງພວກຂ້າພະເຈົ້າແມ່ນ ຍິງ-ຊາຍ ຮັບຜິດຊອບຮ່ວມກັນຄົນລະ 50% ໃນການບົວລະບັດ-ຮັກສາ, ຊາຍ ຮັບຜິຊອບຫຼັກໃນການໃສ່ປຸ໋ຍ 97.58%, ຂຸດຄົ້ນ 96.77%; (Sarku, 2016) ທີ່ໄດ້ສຶກສາການມີສ່ວນຮ່ວມຂອງເພດຍິງ ແລະ ເພດຊາຍໃນກິດຈະກໍາການປູກປາມນໍ້າມັນ ຜົນການຄົ້ນຄວ້າພົບວ່າ ເພດຊາຍ ມີໜ້າທີ່ຮັບຜິດຊອບຫຼັກທີ່ກວມເອົາຫຼາຍກວ່າເຄິ່ງໜຶ່ງ 58.3% ຈາກທັງໝົດ 12 ກິດຈະກໍາ, ເມື່ອທຽບກັບຜົນການຄົ້ນຄວ້າແມ່ນມີຄວາມແຕກຕ່າງກັນເນື່ອງຈາກເພດຊາຍ ບໍ່ມີໜ້າທີ່ຮັບຜິດຊອບຫຼັກໃນກິດຈະກໍາໃດເລີຍ ເພາະທຸກກິດຈະກໍາຂອງສວນປູກໄມ້ສັກ ຈະມີເພດຍິງເຂົ້າຮ່ວມນໍາ; (Sato Mayumi, 2019) ວິເຄາະໂອກາດ ແລະ ຄວາມສ່ຽງຂອງວຽກງານປຸງແຕ່ງໄມ້ ແລະ ເຟີນີເຈີ ຂະໜາດນ້ອຍ ແລະ ຂະໜາດກາງ ໃນ ສປປ ລາວ ໃຫ້ຮູ້ວ່າ: ເພດຊາຍ ແລະ ເພດຍິງ ໃຫ້ຄວາມສໍາຄັນໃນໜ້າວຽກທີ່ແຕກຕ່າງກັນ ຊຶ່ງເຂົາເຈົ້າໄດ້ມີການປະກອບສ່ວນວຽກງານຢ່າງເທົ່າທຽມກັນ ອີງຕາມໜ້າວຽກ ແລະ ໄດ້ຮັບຄ່າຕອບແທນທີ່ຕ່າງກັນ ດ້ວຍການອີງຕາມເພດ; (Ling & Smith, 2021) ໄດ້ກ່າວວ່າ: ເພດຍິງ ແລະ ເພດຊາຍ ແມ່ນມີບົດບາດທີ່ແຕກຕ່າງກັນໃນສວນປູກ ແລະ ວຽກງານອຸດສາຫະກໍາປຸງແຕ່ງໄມ້ ໃນນັ້ນການປະກອບສ່ວນວຽກງານຂອງແມ່ຍິງສ່ວນໃຫຍ່ແມ່ນຖືກຮັບຮູ້ ແລະ ຖືກປະເມີນເປັນວຽກທີ່ເບົາ; (Shinawatra, Tongsiri, & Pitackwong, 2013) ສຶກສາກ່ຽວກັບບົດບາດຂອງຊາຍ-ຍິງ ໃນລະບົບການເຮັດຟາມ ໃນອໍາເພີ ພຮ້າວ ຈັງຫວັດຊຽງໃໝ່ ກໍລະນີສຶກສາໃນເຂດສະຫະກອນນິຄົມ ຜົນການສຶກສາລາຍງານວ່າ: ບົດບາດຂອງຊາຍ ແລະ ຍິງແມ່ນບໍ່ມີຄວາມແຕກຕ່າງກັນໃນສັງຄົມຊົນນະບົດທາງພາກເໜືອ ເນື່ອງຈາກມີສະພາບແວດທີ່ຄ້າຍຄືກັນ, ຜົນການສຶກສາດັ່ງກ່າວໄດ້ຊີ້ແຈງໃຫ້ເຫັນວ່າ ແມ່ຍິງມີພາລະໃນການເຮັດວຽກທັງໃນ ແລະ ນອກເຮືອນ ຊຶ່ງພວກເຂົາບໍ່ມີໂອກາດໃນການຮັບຮູ້ຂ່າວສານຂອງໂລກພາຍນອກ. ສະນັ້ນ, ເຮັດໃຫ້ເຂົາເຈົ້າມີຄວາມຮູ້ໜ້ອຍກ່ຽວກັບການກະເສດ, ແຕ່ໃນຄວາມເປັນຈິງພວກເຂົາເຮັດວຽກຢູ່ຄຽງຂ້າງ ກັບຜູ້ຊາຍ.

ຕໍ່ກັບຜົນການຄົ້ນຄວ້າຂອງຫຼາຍທ່ານທີ່ໄດ້ມີການສຶກສາມາກ່ອນແລ້ວນັ້ນ ລ້ວນແລ້ວແຕ່ມີຜົນທີ່ສະແດງໃຫ້ເຫັນເຖິງຄວາມແຕກຕ່າງກັນກັບຜົນການຄົ້ນຄວ້າຂອງພວກຂ້າພະເຈົ້າ. ເຖິງວ່າຈະມີຄວາມແຕກຕ່າງກັນກໍຕາມແຕ່ຄວາມເປັນຈິງແລ້ວທຸກຜົນການຄົ້ນຄວ້າລ້ວນແລ້ວແຕ່ສະແດງໃຫ້ເຫັນເຖິງຄວາມສະເໝີພາບກັນລະຫວ່າງຍິງ ແລະ ຊາຍ ທາງດ້ານ ໜ້າທີ່ຮັບຜິດຊອບ, ການຈັດຕັ້ງປະຕິບັດ

ແລະ ກິດຈະກຳຕ່າງໆ.

## 5. ສະຫຼຸບ (Conclusion)

ຈາກການສຶກສາຄົ້ນຄວ້າກ່ຽວກັບ ບົດບາດຍິງ-ຊາຍ ໃນວຽກງານປູກໄມ້ ຂອງປະຊາຊົນ ເມືອງປາກລາຍ ແຂວງໄຊຍະບູລີ ພົບວ່າ: ຍິງ-ຊາຍ ແມ່ນມີຄວາມສະເໝີພາບເທົ່າທຽມກັນ ທີ່ສະແດງໃຫ້ເຫັນໄດ້ໃນການປະຕິບັດຕາມໜ້າທີ່ຮັບຜິດຊອບຂອງຕົນເອງໃນກິດຈະກຳສວນປູກໄມ້; ໃນນັ້ນມີ 3 ກິດຈະກຳ ທີ່ເພດຍິງ ມີສ່ວນຮ່ວມໜ້ອຍ ຄື: ການຂຸດຂຸມ; ການໃສ່ປຸ໋ຍ ແລະ ການຂຸດຄົ້ນ ເນື່ອງຈາກກິດຈະກຳທັງ 3 ນີ້ເປັນວຽກທີ່ຕ້ອງໄດ້ໃຊ້ແຮງງານໜັກ ແລະ ມີຄວາມສ່ຽງສູງ. ໃນການປະຕິບັດໜ້າທີ່ວຽກງານໃດໜຶ່ງຂອງສວນປູກໄມ້ ຍິງ-ຊາຍ ແມ່ນໄດ້ມີການປຶກສາຫາລື ແລະ ແບ່ງໜ້າທີ່ຄວາມຮັບຜິດຊອບເຊິ່ງກັນ ແລະ ກັນ ໂດຍອີງຕາມຄວາມໜັກເບົາທາງດ້ານໜ້າວຽກ ແລະ ຄວາມແຂງແຮງທາງດ້ານຮ່າງກາຍ ເພື່ອຄວາມສະເໝີພາບ ແລະ ການໃຫ້ກຽດເຊິ່ງກັນ ແລະ ກັນ.

ທາງດ້ານຄວາມເພິ່ງພໍໃຈ ໃນກິດຈະກຳສວນປູກລະຫວ່າງຍິງ ແລະ ຊາຍ ແມ່ນການສະແດງຄ່າທີ່ແຕກຕ່າງກັນເຊິ່ງ ເພດຍິງ ມີລະດັບຄ່າເທົ່າກັບ **"ພໍໃຈຫຼາຍ"** ແລະ ເພດຊາຍ ມີລະດັບຄ່າ ຢູ່ທີ່ **"ພໍໃຈ"** ສະແດງໃຫ້ເຫັນວ່າທັງສອງເພດ (ຍິງ-ຊາຍ) ຕ່າງກໍ່ມີຄວາມເພິ່ງພໍໃຈໃນໜ້າວຽກຂອງຕົນ.

## 6. ຂໍ້ຂັດແຍ່ງ

ທີມງານຂອງພວກຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍຢັ້ງຢືນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ທີມງານຂອງຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຝ່າຍດຽວ.

## 7. ຄຳຂອບໃຈ

ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈມາຍັງໂຄງການ ACIAR-VALTIP3 (FST/2016/151 " Advancing enhanced wood manufacturing industry in Laos & Australia " ທີ່ຊ່ວຍໃນການສະໜອງທຶນ ແລະ ອຳນວຍຄວາມສະດວກທາງດ້ານງົບປະມານເຂົ້າໃນການສຶກສາຄົ້ນຄວ້າໃນຄັ້ງນີ້ຈົນປະສົບຜົນສຳເລັດ.

## 8. ເອກະສານອ້າງອີງ

R Ahiable. (1996). The role of women in tree planting: 31st December Women's Movement experience. FAO.

Ministry of Agriculture and Forestry . (2015). Agricultural development strategy until 2025 and vision to 2030.

Davio Steve. (2021). Women participated in the village forest. The guideline for negociation the voluntry partnership agreement (RRDPA).

KoboToolbox. (2022). Kobo hosts and maintains KoboToolbox, a data collection, management, and visualization platform used globally for research and social good. https://www.kobotoolbox.org/about-us/

Google. (2022). Google forms. https://workspace.google.com/intl/en_au/products/forms/.

Lao Women Union (2005) The status of gender in Lao P.D.R. World Bank.

Ling, M. S., Phonetip, K., Soukphaxay, M. K., Chaisee, M. S., & Sittivong, M. K. (2021). Livelihood impacts for women due to employment in a teak wood processing factory, Paklay District, Xayaboury Province, Lao PDR.

Ling, S and Phonetip, K. (2022). Gender and employment in the Burapha plywood factory, Hin Heup District, Vientiane Province, Lao PDR.

Pasaribu, S. W., Kaskoyo, H., & Safe'i, R. (2019). The Gender Role in Agroforestry Management in Sungai Langka Village, Gedong Tataan District, Pesawaran Regency, Lampung Province. Journal of Sylva Indonesiana, 2(02), 62-69.

Phonetip, K; Ling, S; Boupha, L; Thorathy, S; Sichaleuene, O; Bounphalack, K; Ontavong, L & Khambouddaphan, S. (2021). The Contribution to Lao Wood processing sectors of the Wood Science and Wood Products Research Center (WS-WPRC)- training facility supported by ACIAR-VALTIP3.

Raney, T., Anríquez, G., Croppenstedt, A., Gerosa, S., Lowder, S. K., Matuschke, I.,

& Skoet, J. (2011). Gender differences in assets.

RECOFTC, (2013). Gender roles in REDD+

Sato Mayumi. (2019). Social and gender analysis of FLEGT: Analysing opportunities and risks for wood processing and furnitures SEMs in Lao P.D.R. RECOFTC.

Shinawatra, B., Tongsiri, B., & Phithakwong, C. (1987). Differential roles of men and women in the farming systems of Amphoe Phrao, Changwat Chiang Mai, Thailand.

Sarku, R. (2016). Analyses of gender roles in the oil palm industry in Kwaebibirem District, Ghana. International Journal of Humanities and Social Sciences, 6(3), 187-198.

Smith, H. and Ling, S. (2020). Gender roles in teak plantation wood processing in Laos. Info brief of VALTIP3-ACIAR.




ຮູບພາບທີ 1: ເພດຂອງຜູ້ຕອບແບບສອບຖາມ




ຮູບພາບທີ 2: ການມີສ່ວນຮ່ວມລະຫວ່າງຍິງ-ຊາຍ ໃນກິດຈະກຳສວນປູກ




ຮູບພາບທີ 3: ລະດັບຄວາມເພິ່ງພໍໃຈຂອງ ເພດຍິງ ໃນກິດຈະກຳສວນປູກ




ຮູບພາບທີ 4: ລະດັບຄວາມເພິ່ງພໍໃຈຂອງ ເພດຊາຍ ໃນກິດຈະກຳສອນປູກ




ຮູບພາບທີ 5: ການທຽບລະດັບຄວາມເພິ່ງພໍໃຈລະຫວ່າງຍິງ-ຊາຍ ໃນກິດຈະກຳສອນປູກ